ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

1004 ..ກ

ເລກທີ / ກທຄວ

ນະຄອນຫຼວງວຽງຈັນ, ວັນທີ 19 ພະຈິກ 2021

# ແຈ້ງການ

ເຖິງ : ເຈົ້າໜ້າທີ່ທະບຽນວິສາຫະກິດ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ.

- ເຈົ້າໜ້າທີ່ທະບຽນວິສາຫະກິດ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ,ນະຄອນ

ເລື່ອງ: ການຮັບຮອງຈົດທະບຽນເລກປະຈຳຕົວຜູ້ເສຍອາກອນ ເຂົ້າໃນລະບົບ TAXRIS ແລະ ການເຂົ້າລະບົບອາກອນມູນຄ່າເພີ່ມ.

- ອີງຕາມ ຂໍ້ຕົກລົງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ວ່າດ້ວຍການຈັດຕັ້ງ ແລະ ການ ເຄື່ອນໄຫວ ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ສະບັບເລກທີ 1752/ ອຄ, ລົງວັນທີ 19 ກັນຍາ 2016;
- ອີງຕາມ ບົດບັນທຶກກອງປະຊຸມ ລະຫວ່າງກົມສ່ວຍສາອາກອນ ແລະ ກົມທະບຽນ ແລະ ວິສາຫະກິດ ສະບັບລົງວັນທີ 09 ມີນາ 2021.;
- ອີງຕາມແຈ້ງການ ຂອງກົມສ່ວຍສາອາກອນ ສະບັບເລກທີ 4104/ກສອ,ລົງວັນທີ 22 ຕຸລາ 2021.

ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ການຕິດຕາມ, ຄຸ້ມຄອງ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃຫ້ແກ່ຫົວໜ່ວຍທຸລະກິດ ທີ່ຂຶ້ນທະບຽນວິສາຫະກິດໃຫມ່ ແລະ ເປັນການຫລຸດຂັ້ນຕອນ, ເວລາ ແລະ ຄ່າໃຊ້ຈ່າຍ ໃນການເລີ່ມຕົ້ນທຸລະກິດ ຂອງ ສປປ ລາວ ຕາມການປະເມີນຂອງ ທະນາຄານໂລກ ປີ 2020 ຈາກທັງໝົດ 9 ຂັ້ນຕອນ ມາເປັນ 3 ຂັ້ນຕອນ ເພື່ອຮັບຮອງການຈົດທະບຽນເລກປະຈຳຕົວຜູ້ເສຍອາກອນ ເຂົ້າໃນລະບົບ TAXRIS ໃຫ້ແກ່ນິຕິບຸກຄົນ, ວິສາຫະກິດສ່ວນບຸກຄົນ ໃຫ້ເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ອອກແຈ້ງການມາຍັງເຈົ້າໜ້າທີ່ທະບຽນວິສາຫະກິດໃນຂອບເຂດທົ່ວປະເທດ ເພື່ອຊາບ ແລະ ຈັດຕັ້ງປະຕິບັດດັ່ງລາຍລະອຽດລຸ່ມນີ້:

1. ປະຈຸບັນຂະແໜງສ່ວຍສາອາກອນໄດ້ລົບລ້າງຂັ້ນຕອນການປະຖົມນິເທດ ຕາມແຈ້ງການ ຂອງກົມສ່ວຍສາອາກອນ ສະບັບເລກທີ 4104/ ກສອ, ລົງວັນທີ 22 ຕຸລາ 2021 ໂດຍນຳໃຊ້ບົດບັນທຶກແນະນຳວຽກງານສ່ວຍສາອາກອນສຳລັບວິສາຫະກິດຂຶ້ນໃໝ່ ແທນບົດບັນທຶກການປະຖົມນິເທດ ຕາມຮ່າງທີ່ກົມສ່ວຍສາອາ ກອນໄດ້ກຳນົດໄວ້ ( ຄັດຕິດມາພ້ອມນີ້ );
2. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ປະສານກັບເຈົ້າໜ້າທີ່ສ່ວຍສາອາກອນ ຕາມຂັ້ນຄຸ້ມຄອງຂອງຕົນເພື່ອ



Scanned with CamSca

ເອົາຄຳແນະນຳການປະຕິບັດພັນທະອາກອນ ທີ່ເຈົ້າໜ້າທີ່ສ່ວຍສາອາກອນລົງລາຍເຊັນ ແລະ ຈ້ຳກາປະທັບໄວ້ແລ້ວນັ້ນ ມາໄວ້ຫ້ອງການທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອໃຫ້ຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດໃໝ່ໄດ້ລົງລາຍເຊັນບົດບັນທຶກດັ່ງກ່າວ ໃນເວລາມາຮັບເອົາໃບທະບຽນວິສາຫະກິດ ໂດຍບໍ່ຕ້ອງໄປປະຖົມນິເທດນຳຂະແໜງສ່ວຍສາອາກອນອີກ ;

3. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ນຳສົ່ງສຳນວນ ສະໂນດທະບຽນວິສາຫະກິດ ພ້ອມຄຳແນະນຳ ການປະຕິບັດ ພັນທະອາກອນ ທີ່ມີລາຍເຊັນຂອງວິສາຫະກິດ ໃຫ້ຂະແໜງສ່ວຍສາອາກອນ 1ອາທິດຕໍ່ຄັ້ງ ຫລື ກ່ອນກຳນົດ ເພື່ອໃຫ້ເຈົ້າໜ້າທີ່ ສ່ວຍສາອາກອນ ກົດຢືນຢັນໃນລະບົບ TAXRIS ເປັນຫົວໜ່ວຍເຄື່ອນໄຫວເລີຍ;

4. ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງວຽງຈັນ,ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ສືບຕໍ່ປະສານສົມທົບກັບ ເຈົ້າໜ້າທີ່ສ່ວຍສາອາກອນ ຕາມຂັ້ນຄຸ້ມຄອງຂອງຕົນ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ;

5. ໃຫ້ເລີ່ມຈັດຕັ້ງປະຕິບັດແຕ່ວັນທີ 1 ທັນວາ 2021 ເປັນຕົ້ນໄປ.

ດັ່ງນັ້ນ ຈຶ່ງແຈ້ງມາເພື່ອຊາບ ແລະ ປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມ

ອະພິສິດ ແສງສຸລິວົງ



ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ , ກະຊວງອຸດສາຫະກຳ ແລະ ການຄ້າ ,ພະແນກບໍລິການຂຶ້ນທະບຽນວິສາຫະກິດ, ໂທລະສັບ: 021 412011

Scanned with CamSca